

# ແຜນງານການພັດທະນາທ້ອງຖິ່ນ

*ແຜນງານ LAO/338*

**ຂະແໜງການ** | ການພັດທະນາເສດຖະກິດ-ສັງຄົມ

**ອົງການ** | LuxDev

**ໄລຍະເວລາ** | 60 ເດືອນ (ເດືອນມັງກອນ 2023 - ທັນວາ 2027)

## ບັນດາກຸ່ມເປົ້າໝາຍ

ປະຊາຊົນທີ່ອາໄສຢູ່ໃນບ້ານເປົ້າໝາຍຈຳນວນ 226 ບ້ານໃນ 17 ເມືອງເປົ້າໝາຍ ເຊິ່ງຈະໄດ້ຮັບການຊຸກ ຍູ້ທາງດ້ານກອງທຶນພັດທະນາບ້ານ (ປະມານ 172,000 ຄົນ) ແລະ ປະຊາຊົນທັງໝົດໃນ 20 ເມືອງ ທີ່ຈະໄດ້ຮັບຜົນປະໂຫຍດຈາກການລົງທຶນໃນລະບົບພື້ນຖານໂຄງລ່າງ (ປະມານ 790,000 ຄົນ).

## ສະຖາບັນທີ່ຜູກພັນ

ພະແນກ ແຜນການ ແລະ ການລົງທຶນຂັ້ນແຂວງ ແລະ ຫ້ອງການ ແຜນການ ແລະ ການລົງທຶນຂັ້ນເມືອງ ເຊິ່ງໄດ້ຮັບການຊຸກຍູ້ໂດຍ ກະຊວງ ແຜນການ ແລະ ການລົງທຶນ.

## ນະໂຍບາຍຂອງຂະແໜງການ ແລະ ຍຸດທະສາດທີ່ອ້າງອີງ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂັ້ນແຂວງ ແລະ ຂັ້ນເມືອງພ້ອມດ້ວຍ ຍຸດທະສາດໃນ ການພັດທະນາຂອງຂະແໜງການສຶກສາ, ສາທາລະນະສຸກ, ກະສິກຳ, ໂພຊະນາການ ແລະ ການຫຼຸດຜ່ອນ ຄວາມສ່ຽງຈາກໄພພິບັດ.

**ງົບປະມານ** | 33,930,000 ເອີໂຣ
(ລຸກຊຳບວກ : 27,000,000 ເອີໂຣ – ສະວິດ: 6,930,000 ເອີໂຣ)




ໃນທົດສະວັດຜ່ານມາ, ສປປ ລາວ ໄດ້ມີການເຕີບໂຕທາງເສດຖະກິດມະຫາພາກທີ່ກ້າວກະ ໂດດ. ຢ່າງໃດກໍ່ຕາມ, ເນື່ອງຈາກວິກິດການທາງດ້ານເສດຖະກິດ-ສັງຄົມປະຈຸບັນເຊິ່ງເປັນສາ ເຫດມາຈາກ ລະດັບໜີ້ສິນສາທາລະນະທີ່ສູງຂຶ້ນ ແລະ ສະພາບການດັ່ງກ່າວແມ່ນຖືກຊ້ຳເຕີມ ໂດຍການລະບາດຂອງພະຍາດໂຄວິດ-19, ເຊິ່ງໄດ້ເຮັດໃຫ້ການເປັນຢູ່ຂອງປະຊາ ຊົນໄດ້ຮັບຜົນກະທົບ, ໂດຍສະເພາະ ຢູ່ໃນເຂດຫ່າງໄກຊອກຫຼີກ. ຍັງປະກົດມີຄວາມ ບໍ່ສະເໝີພາບ ລະຫວ່າງ ເຂດຕົວເມືອງ ແລະ ຊົນນະບົດ ເຊິ່ງມີລາຍຮັບທີ່ຕ່ຳ, ຕົວຊີ້ວັດດ້ານ ການສຶກສາ, ສາທາລະນະສຸກ, ໂພຊະນາການໃນຊຸມຊົນຂອງເຂດຊົນນະບົດທີ່ຕ່ຳ. ເຊິ່ງຕົວຊີ້ວັດ ດັ່ງກ່າວ ແມ່ນພົວພັນກັບການຂາດເຂີນທາງດ້ານຊັບພະຍາກອນທີ່ເພີ່ມຂຶ້ນ, ການເຊື່ອມ ໂຊມຂອງສິ່ງແວດລ້ອມ, ສິ່ງທ້າທາຍທາງດ້ານການປົກຄອງ ແລະ ການໃຫ້ບໍລິການດ້ານສາ ທາລະນະທີ່ບໍ່ພຽງພໍ. ນອກນັ້ນ, ການທີ່ມີທີ່ຕັ້ງ ພູມສາດທີ່ ແຍກຈາກກັນ, ບັນຫາການເຂົ້າເຖິງ ແລະ ທ່າແຮງທາງ ດ້ານກະສິກຳທີ່ມີຂໍ້ຈຳກັດ.

ຄາດຄະເນຜົນໄດ້ຮັບຂອງແຜນງານການພັດທະນາທ້ອງຖິ່ນ ຫຼື (LDP) ແມ່ນ “ຊີວິດການເປັນຢູ່ຂອງປະຊາຊົນລາວໄດ້ຮັບການປັບປຸງ, ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ”. ເຊິ່ງເປົ້າໝາຍລວມດັ່ງກ່າວ ແມ່ນໄດ້ສະທ້ອນ ໃຫ້ເຫັນໃນບັນດາບູລິມະສິດຂອງແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ຂອງລັດຖະບານ (2021-2025), ເປົ້າໝາຍຂອງແຜນການງານຮ່ວມມືທີ່ມີຕົວຊີ້ວັດ ຄັ້ງທີ V ຂອງອົງການຊ່ວຍເຫຼືອ ແລະ ພັດທະນາຂອງລຸກຊຳບວກ (2023-2027) ແລະ ແຜນງານເພື່ອການພັດທະນາຂົງເຂດແມ່ນ້ຳຂອງ ຂອງອົງການ ເພື່ອການພັດທະນາ ແລະ ຮ່ວມມືຂອງປະເທດສະວິດ (2022-2025) ເຊິ່ງໄດ້ສົມທົບທຶນຮ່ວມກັນໃນແຜນງານ LDP.

ແຜນງານ LDP ແມ່ນໄດ້ຮັບການສ້າງຂຶ້ນໂດຍການທີ່ມີສາຍພົວພັນທີ່ໃກ້ຊິດເຊິ່ງ ໄດ້ເກີດຈາກແຜນງານ (LAO/030) ໃນເມື່ອກ່ອນຮ່ວມກັບກະຊວງ ແຜນການ ແລະ ການຮ່ວມມື, ໂດຍສະເພາະພະແນກແຜນການ ແລະ ການຮ່ວມມື, ລວມທັງ ບັນດາໜ່ວຍງານທີ່ກ່ຽວຂ້ອງໃນ 4 ແຂວງທີ່ເປັນຄູ່ຮ່ວມດັ່ງກ່າວ.

ຈະສືບຕໍ່ການສະໜັບສະໜູນການພັດທະນາທີ່ມີສ່ວນຮ່ວມ ໂດຍການນຳໃຊ້ວິທີການວາງ ແຜນທີ່ມີສ່ວນຮ່ວມ ແລະ ຊ່ອງທາງຂອງຊັບພະຍາກອນຂອງແຜນງານເຂົ້າ ໃນການກຳນົດບັນດາບູລິມະສິດໃນຂັ້ນເມືອງ ແລະ ຂັ້ນບ້ານ.ໄດ້ມີການສຸມໃສ່ການ ພັດທະນາຄວາມສາມາດໃນຂັ້ນສູນກາງ, ແຕ່ວ່າ ລະດັບລຸ່ມຂັ້ນສູນກາງລົງມາຈະໃຫ້ການຊ່ວຍເຫຼືອເຈົ້າໜ້າທີ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານໃນ ການປັບປຸງການໃຫ້ບໍລິການຂອງ ພາກລັດເພື່ອຜົນປະໂຫຍດຂອງຊຸມຊົນທ້ອງຖິ່ນ. ໃນການປັບປຸງຄວາມສາມາດຂອງ ທຸກລະດັບ ແລະ ການມີສ່ວນກ່ຽວຂ້ອງໃນການ ສົນທະນາໃນຂັ້ນນະໂຍບາຍ, ໂຄງການ LDP ມີເປົ້າໝາຍແນໃສ່ການຫຼຸດຜ່ອນໄພ ຄຸກຄາມທີ່ບັນດາຊຸມຊົນໃນ ສປປ ລາວ ປະສົບ, ເຊິ່ງລວມມີ ຄວາມບໍ່ໝັ້ນຄົງໃນການ ຄອບຄອງທີ່ດິນ, ການຕັດໄມ້ທຳລາຍປ່າ ແລະ ຜົນໄດ້ຮັບໃນຂະແໜງການສຶກສາທີ່ຕ່ຳ.

ໃນຂະນະທີ່ການສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມອາດສາມາດຂອງບັນດາໜ່ວຍງານທີ່ ກ່ຽວຂ້ອງຂັ້ນສູນກາງ, ໂຄງການ LDP ຈະສຸມໃສ່ບັນດາບ້ານ ແລະ ເມືອງທີ່ທຸກຍາກທີ່ ສຸດ ໃນແຂວງບໍ່ແກ້ວ, ແຂວງວຽງຈັນ, ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ, ລວມທັງ ການຂະຫຍາຍການດຳເນີນງານອອກໄປເພື່ອໃຫ້ສາມາດກວມເອົາ 20 ເມືອງ ແລະ 226 ບ້ານ.

ຄາດຄະເນຈຳນວນປະຊາຊົນປະມານ 172,000 ທີ່ຈະໄດ້ຮັບຜົນປະໂຫຍດຈາກ ການສະໜັບສະໜູນກອງທຶນຂັ້ນບ້ານ ແລະ ປະຊາຊົນຈຳນວນ 790,000 ຄົນຈະໄດ້ຮັບຜົນປະໂຫຍດຈາກການລົງທຶນໃນລະບົບພື້ນຖານໂຄງລ່າງໃນຂັ້ນເມືອງ.

**ຊີວິດການເປັນຢູ່ຂອງປະຊາຊົນລາວ ໄດ້ຮັບການປັບປຸງ, ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ.**

↑ ສະຖານະທາງເສດຖະກິດຂອງປະຊາຊົນລາວ ໄດ້ຮັບການປັ ັບ ປຸງ, ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ.

↑ ປະຊາຊົນລາວສາມາດເຂົ້າເຖິງການໃຫ້ບໍລິການພື້ນ ຖານຂອງ ພາກລັດທີ່ໄດ້ຮັບການປັບປຸງ,ບໍ່ປະຖິ້ມໃຜໄວ້ຂ້າງ.

**ການພັດທະນາທ້ອງຖິ່ນ IC-1**

ໄດ້ມີການໂອກາດທາງດ້ານເສດຖະກິດ-ສັງຄົມໃນ ການດໍາລົງຊີວິດທີ່ຍືນຍົງໃຫ້ແກ່ປະຊາຊົນລາ.

**ການພັດທະນາທ້ອງຖິ່ນ IC-2**

ປະຊາຊົນລາວ ສາມາດເຂົ້າເຖິງການໃຫ້ບໍລິການ ຂອງພາກລັດທີ່ໄດ້ຮັບການປັບປຸງ ແລະ ມີຄວາມທົນ ທານດີຂຶ້ນ.

**ການພັດທະນາທ້ອງຖິ່ນ IC-3**

ປະຊາຊົນລາວ ສາມາດເຂົ້າເຖິງການບໍລິການຂັ້ນບ້ານ ໄດ້ຮັບການປັບປຸງ ແລະ ມີຄວາມທົນທານດີຂຶ້ນ.

## ວິໄສທັດດ້ານການປ່ຽນແປງ

ເພື່ອທີ່ຈະສາມາດບັນລຸຜົນໄດ້ຮັບທີ່ຄາດຫວັງໄວ້, ໂຄງການ LDP ແມ່ນໄດ້ຮັບການສ້າງຈາກທິດສະດີວ່າດ້ວຍ ການປ່ຽນແປງເຊິ່ງສາມາດອະທິບາຍດັ່ງນີ້:"ຖ້າຫາກ ຄວາມອາດສາມາດຂອງລັດຖະບານໃນການພັດທະນາທ້ອງຖິ່ນ ແລະ ລະບົບການປົກຄອງຂັ້ນທ້ອງຖິ່ນໄດ້ຮັບການສ້າງຄວາມເຂັ້ມແຂງ, ຖ້າຫາກ ບ້ານເປົ້າໝາຍໄດ້ຮັບການສ້າງຂີດຄວາມ ສາມາດເພື່ອທີ່ຈະປະກອບສ່ວນເຂົ້າໃນການວາງແຜນການພັດທະນາ ແລະ ບັນດາກິດຈະກໍາຕ່າງໆໃນການດໍາລົງຊີວິດແມ່ນມີການເພີ ີ່ມພູນຜະລິດຜົນທີ່ດີ ແລະ ມີໂພຊະນາການທີ່ດີ, ລວມທັງ ການທີ່ມີລະບົບພື້ນຖານໂຄງລ່າງ/ສິ່ງອໍານວຍຄວາມສະດວກທາງສັງຄົມທີ່ມີຄຸນະພາບ ແລະ ການບໍລິການໃນບັນດາບ້ານດັ່ງກ່າວ ໄດ້ຮັບການສ້າງ ແລະ ສາມາດເຂົ້າເຖິງ, ຈະເຮັດໃຫ້ຊີວິດການ ເປັນຢູ່ຂັ້ນບ້ານໄດ້ຮັບການປັບປຸງດີຂຶ້ນ ແລະ ບັນດາບ້ານເປົ້າໝາຍໄດ້ຮັບການຍົກລະດັບໃຫ້ສູງຂຶ້ນດ້ວຍຄວາມຍືນຍົງຈາກລະດັບຂັ້ນທຸກຍາກ ເນື່ອງຈາກວ່າ ລັດຖະບານ ແລະ ປະຊາຊົນ ຂັ້ນບ້ານສາມາດມີຄວາມຮັບຜິດຊອບຢ່າງຄົບຖ້ວນ, ການມີທຶນ ແລະ ການມີກໍາມະສິດສໍາລັບໜ້າວຽກການພັດທະນາທ້ອງຖິ່ນ. "

### ໄດ້ມີການກໍານົດ 3 ການປ່ຽນແປງໄລຍະກາງ (IC) ພ້ອມກັບບູລິມະສິດຂົງເຂດໃນການເຂົ້າໄປມີສ່ວນຮ່ວມ

- IC1 ຈະສຸມໃສ່ການຮັບປະກັນວ່າ ບັນດາຄົວເຮືອນໃນເຂດຊົນນະບົດ ໄດ້ປັບປຸງໂອກາດໃນການເພີ່ມພູນຜະລິດຜົນ ແລະ ການດໍາລົງຊີວິດດ້ວຍຄວາມຍືນຍົງ. ການເຂົ້າໄປມີສ່ວນຮ່ວມ ລວມມີ: ການຄຸ້ມຄອງທີ່ດິນ, ການຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ ແລະ ການປັບຕົວໃຫ້ເຂົ້າກັບການປ່ຽນແປງທາງດິນຟ້າອາກາດ, ການສົ່ງເສີມໂພຊະນາການ, ການເຂົ້າເຖິງການໃຫ້ບໍລິການ ທາງການເງິນ, ການເຂົ້າເຖິງຕະຫຼາດ ແລະ ການຂະຫຍາຍກະສິກໍາ;
- IC2 ຈະຊຸກຍູ້ການປັບປຸງການເຂົ້າເຖິງສິ່ງອໍານວຍຄວາມສະດວກຂອງລະບົບພື້ນຖານໂຄງລ່າງໂດຍຜ່ານ ການກໍ່ສ້າງ, ການຟື້ນຟູ ແລະ ວຽກງານການບໍາລຸງຮັກສາ. ຈະມີການລວມກັນກັບການເຂົ້າໄປມີສ່ວນຮ່ວມໃນການສ້າງຄວາມເຂັ້ມແຂງແກ່ການປົກຄອງ ແລະ ການສຶກສາ;
- IC3 ຈະສືບຕໍ່ໃຫ້ການຊຸກຍູ້ໃນຂະບວນການວາງແຜນການພັດທະນາຂັ້ນບ້ານແບບມີສ່ວນຮ່ວມທີ່ໄດ້ຮັບການສ້າງຂຶ້ນພາຍໃຕ້ໂຄງການ LAO/030 ໃນການຊອກຫາ ແລະ ກໍານົດບູລິມະສິດທາງດ້ານຄວາມຕ້ອງການຂອງບ້ານ. ແຜນຂອງບ້ານດັ່ງກ່າວ ແມ່ນຈະໄດ້ຮັບການສະໜັບສະໜູນຈາກກອງທຶນພັດທະນາບ້ານ ເພື່ອທີ່ຈະສາມາດບັນລຸບູລິມະສິດຂອງຊຸມຊົນໃນການຟື້ນຟູ/ບໍາລຸງຮັກສາລະບົບພື້ນຖານໂຄງລ່າງ, ການສະໜອງສິນເຊື່ອ ແລະ ການພັດທະນາຄວາມອາດສາມາດອື່ນໆອີກດ້ວຍ.

### ການດໍາເນີນງານເພື່ອເຮັດໃຫ້ເກີດປະສິດທິພາບ ແລະ ປະສິດທິຜົນສູງສຸດຂອງໂຄງການ LDP ລວມມີ:

- ຮັບປະກັນຄວາມສອດຄ່ອງກັນ ລະຫວ່າງ ຍຸດທະສາດແຫ່ງຊາດໃນປະຈຸບັນ ແລະ ອະນາຄົດ;
- ນໍາໃຊ້ຄູ່ມືແນະນໍາຂອງລັດຖະບານ ແລະ ລະບົບໃນການຈັດຊື້-ຈັດຈ້າງ ແລະ ການຕິດຕາມກວດກາ;
- ສົ່ງເສີມການຖືກໍາມະສິດທ້ອງຖິ່ນໂດຍຜ່ານຂະບວນການກໍານົດບູລິມະສິດຂອງຂັ້ນຕອນໃນຂັ້ນເມືອງ ແລະ ຂັ້ນບ້ານ;
- ປະສານກັບຄູ່ຮ່ວມພັດທະນາອື່ນເພື່ອຫຼີກລ່ຽງການທັບຊ້ອນ;
- ຮັບຮອງເອົາວິທີການທີ່ຍືດຍຸ່ນໃນການສ້າງງົບປະມານເພື່ອໃຫ້ລາງວັນແກ່ບັນດາບ້ານ ແລະ ເມືອງທີ່ມີຜົນງານ; ແລະ
- ສ້າງຄວາມເຂັ້ມແຂງໃຫ້ແກ່ການລະບົບການວາງແຜນ, ການຕິດຕາມກວດກາ ແລະ ການປະເມີນທີ່ມີການສ່ອງແສງ ແລະ ການຮຽນຮູ້ຈາກນັ້ນ ປະກອບສ່ວນເຂົ້າໃນການສົນທະນາຂັ້ນ ນະໂຍບາຍ. ຢ່າງໃດກໍ່ຕາມ, ຈະມີການຮອງຮັບລະບົບການສະໜອງທຶນທີ່ມີນະວັດຕະກໍາໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການກະຈາຍອໍານາດ ແລະ ການສ້າງຄວາມສາມາດໃນຂັ້ນ ທ້ອງຖິ່ນ.
- ການລວມເອົາບັນຫາຂ້າມຂະແໜງການເຂົ້າເປັນໜຶ່ງດຽວ (ເຊັ່ນ: ເພດ, ວິທີການທີ່ອີງໃສ່ສິດທິ, ສິ່ງແວດລ້ອມ ແລະ ການປ່ຽນແປງທາງດ້ານດິນຟ້າອາກາດ ແລະ ດິຈິຕອນ ເພື່ອການ ພັດທະນາ) ເຂົ້າໃນການດໍາເນີນງານຫຼັກ, ວິທີການ ແລະ ຂະບວນການ (ເຊັ່ນ: ການວາງແຜນທ້ອງຖິ່ນ ແລະ ການກໍານົດບູລິມະສິດ, ການປະເມີນໂຄງການລົງທຶນ) ຫຼື ການດໍາເນີນມາດ ຕະການສະເພາະໃນການສົ່ງເສີມວຽກງານດັ່ງກ່າວ (ເຊັ່ນ: ການສ້າງລະບົບພື້ນຖານໂຄງລ່າງທີ່ທົນທານຕໍ່ກັບສະພາບດິນຟ້າອາກາດ).

ກົມແຜນການ ແລະ ການລົງທຶນ ແລະ ພະແນກ ແຜນການ ແລະ ການລົງທຶນຂັ້ນແຂວງ ພາຍໃຕ້ ກະຊວງ ແຜນການ ແລະ ການລົງທຶນ ຈະປະສານກັນໃນການເຂົ້າໄປມີສ່ວນຮ່ວມທີ່ກວມ ເອົາຫຼາຍຂະແໜງການໃນຂັ້ນສູນກາງ ແລະ ທ້ອງຖິ່ນດັ່ງທີ່ໄດ້ມີການປະຕິບັດໃນໄລຍະຜ່ານມາຂອງໂຄງການ LDP ໃນນາມລັດຖະບານແຫ່ງ ສປປ ລາວ.

ຕິດຕໍ່ອົງການ LuxDev

ຫ້ອງການປະຈໍາອາຊີ, ອົງການ LuxDev | ແຜນງານການພັດທະນາທ້ອງຖິ່ນ
ຖະໜົນ ດົງໂປນາ, ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ

luxdev.lu

LUXEMBOURG AID & DEVELOPMENT

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

LUXDEV
Luxembourg Development Agency